| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
|---|---|
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອໍານວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອໍານວຍການຝ່າຍທັນຕະກໍາບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**1 ຈາກ 18** |

**1.0 ຖະແຫຼງການກ່ຽວກັບນະໂຍບາຍ.**

Kaiser Foundation Health Plan of Northwest (KFHPNW) ມຸ່ງໝັ້ນທີ່ຈະສະໜອງບັນດາໂຄງການຕ່າງໆທີ່ຊ່ວຍຄໍ້າຊູການເຂົ້າເຖິງການດູແລແຂ້ວສໍາລັບບຸກຄົນທີ່ມີລາຍໄດ້ຕໍ່າ. ຄວາມມຸ່ງໝັ້ນນີ້ລວມທັງການໃຫ້ການຊ່ວຍເຫຼືອທາງດ້ານການເງິນທາງທັນຕະກໍາໃຫ້ແກ່ບັນດາຄົນເຈັບທີ່ມີລາຍໄດ້ຕໍ່າທີ່ມີເງື່ອນໄຂ ທີ່ບໍ່ມີປະກັນໄພ ແລະ ມີປະກັນໄພມູນຄ່າຕໍ່າ ໃນເວລາທີ່ຄວາມສາມາດໃນການຈ່າຍຄ່າບໍລິການ ກາຍເປັນອຸປະສັກຕໍ່ການເຂົ້າເຖິງການດູແລແຂ້ວສຸກເສີນ ແລະ ທີ່ຈໍາເປັນ.

**2.0 ຈຸດປະສົງ.**

ນະໂຍບາຍນີ້ອະທິບາຍເຖິງຂໍ້ກໍານົດຕ່າງໆສໍາລັບການມີເງື່ອນໄຂໄດ້ຮັບ ແລະ ການຮັບການຊ່ວຍເຫຼືອທາງດ້ານການເງິນທາງທັນຕະກໍາ ສໍາລັບການບໍລິການດູແລແຂ້ວສຸກເສີນ ແລະ ທີ່ຈໍາເປັນ ຜ່ານໂຄງການການຊ່ວຍເຫຼືອທາງດ້ານການເງິນທາງທັນຕະກໍາ (DFA). ໂຄງການ DFA ປະກອບດ້ວຍ ການຊ່ວຍເຫຼືອແກ່ການດູແລແຂ້ວເພື່ອການກຸສົນ (ເຕັມສ່ວນ) ແລະ ການຊ່ວຍເຫຼືອແກ່ການດູແລແຂ້ວແບບມີສ່ວນຫຼຸດ (ບາງສ່ວນ).

**3.0 ຂອບເຂດ.**

ນະໂຍບາຍນີ້ ມີຜົນບັງຄັບໃຊ້ກັບບັນດາພະນັກງານທີ່ໄດ້ຮັບການວ່າຈ້າງໂດຍ ຫຼື ທີ່ເຊັນສັນຍາກັບບັນດາບໍລິສັດຕໍ່ໄປນີ້ ແລະ ບັນດາບໍລິສັດໃນເຄືອຂອງພວກເຂົາ (ເຊິ່ງເອີ້ນລວມກັນວ່າ "KFHPNW"):

- Kaiser Foundation Health Plan of the Northwest (KFHPNW) ແລະ
- Permanente Dental Associates, P.C. (PDA)

**4.0 ນິຍາມຄໍາສັບ.**

ເບິ່ງ *ເອກະສານຊ້ອນທ້າຍ A – ປະມວນຄໍາສັບ.*

**5.0 ຂໍ້ກໍານົດຕ່າງໆ.**

KFHPNW ດໍາເນີນໂຄງການ DFA ເພື່ອຫຼຸດຜ່ອນອຸປະສັກທາງການເງິນໃນການເຂົ້າຮັບການບໍລິການດູແລແຂ້ວສຸກເສີນ ແລະ ທີ່ຈໍາເປັນ ສໍາລັບບັນດາຄົນເຈັບທີ່ມີສິດໄດ້ຮັບ ໂດຍບໍ່ຄໍານຶງເຖິງອາຍຸ, ຄວາມພິການ, ເພດ, ເຊື້ອຊາດ, ສາສະໜາ ຫຼື ສະຖານະຄົນເຂົ້າເມືອງ, ລັດທິນິຍົມທາງເພດ, ຊາດກໍາເນີດຂອງຄົນເຈັບ ແລະ ບໍ່ວ່າຄົນເຈັບຈະມີການຄຸ້ມຄອງການດູແລແຂ້ວ ຫຼື ບໍ່ ກໍຕາມ.

Proprietary Information. Kaiser Permanente. All rights reserved.

| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
|---|---|
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອໍານວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອໍານວຍການຝ່າຍທັນຕະກໍາບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**2 ຈາກ 18** |

**5.1 ການບໍລິການທີ່ມີສິດໄດ້ຮັບ ແລະ ບໍ່ມີສິດໄດ້ຮັບພາຍໃຕ້ນະໂຍບາຍ DFA.**

**5.1.1 ການບໍລິການດູແລແຂ້ວທີ່ມີສິດໄດ້ຮັບ.**

DFA ອາດຈະມີຜົນບັງຄັບໃຊ້ກັບການບໍລິການດູແລແຂ້ວທີ່ຈໍາເປັນບາງຢ່າງທີ່ສະໜອງໃຫ້ຢູ່ສະຖານທີ່ແຫ່ງຕ່າງໆຂອງ KFHPNW ຫຼື ໂດຍບັນດາຜູ້ໃຫ້ບໍລິການດູແລແຂ້ວຂອງ KP. ໝາຍເຫດ: ການຊ່ວຍເຫຼືອຄ່າໃຊ້ຈ່າຍສໍາລັບການບໍລິການໂຮງໝໍ ແລະ ບໍລິການທີ່ບໍ່ແມ່ນໂຮງໝໍແບບສຸກເສີນ ແລະ ຈໍາເປັນທາງການແພດ, ໃບສັ່ງຢາ (ລວມທັງໃບສັ່ງຢາແຂ້ວທີ່ຂຽນໂດຍຜູ້ໃຫ້ບໍລິການ KP) ແລະ ອຸປະກອນຮ້ານຂາຍຢາ ແມ່ນໄດ້ຮັບການຄຸ້ມຄອງພາຍໃຕ້ໂຄງການຊ່ວຍເຫຼືອທາງດ້ານການເງິນທາງການແພດ (MFA) ຂອງ KP. ເບິ່ງ www.kp.org/helppaybills (ເປັນພາສາອັງກິດ).

**5.1.2 ການບໍລິການດູແລແຂ້ວທີ່ບໍ່ມີສິດໄດ້ຮັບ.**

DFA ຈະບໍ່ມີຜົນບັງຄັບໃຊ້ກັບການບໍລິການດູແລແຂ້ວທີ່ຖືກພິຈາລະນາວ່າບໍ່ແມ່ນກໍລະນີສຸກເສີນ ຫຼື ທີ່ຈໍາເປັນ ຕາມການພິຈາລະນາຕັດສິນໂດຍຜູ້ໃຫ້ບໍລິການດູແລແຂ້ວຂອງ KP.

**5.1.2.1 ການບໍລິການດູແລແຂ້ວທີ່ສະໜອງໃຫ້ຢູ່ນອກສະຖານທີ່ແຫ່ງຕ່າງໆຂອງ KFHPNW.**

ນະໂຍບາຍ DFA ມີຜົນບັງຄັບໃຊ້ກັບການບໍລິການຕ່າງໆທີ່ສະໜອງໃຫ້ຢູ່ສະຖານທີ່ແຫ່ງຕ່າງໆຂອງ KFHPNW ຫຼື ໂດຍບັນດາຜູ້ໃຫ້ບໍລິການດູແລແຂ້ວຂອງ KFHPNW ເທົ່ານັ້ນ. ເຖິງແມ່ນວ່າຈະມີການນໍາສົ່ງຕໍ່ມາຈາກຜູ້ໃຫ້ບໍລິການດູແລແຂ້ວຂອງ KFHPNW ກໍຕາມ, ການບໍລິການອື່ນໆທັງໝົດ ແມ່ນລ້ວນແຕ່ບໍ່ມີສິດໄດ້ຮັບ DFA.

**5.2 ຂໍ້ມູນກ່ຽວກັບໂຄງການ ແລະ ການຍື່ນຄໍາຮ້ອງຂໍສະໝັກ DFA.**

ຂໍ້ມູນກ່ຽວກັບໂຄງການ DFA, ລວມທັງສະບັບສໍາເນົາຂອງນະໂຍບາຍ, ແບບຟອມຄໍາຮ້ອງຂໍສະໝັກ, ຄໍາແນະນໍາ ແລະ ຂໍ້ສະຫຼຸບກ່ຽວກັບນະໂຍບາຍຕ່າງໆ ແມ່ນມີໃຫ້ທ່ານໂດຍບໍ່ເສຍຄ່າ ໃນຮູບແບບເອເລັກໂຕນິກ ຫຼື ສໍາເນົາທີ່ພິມອອກເປັນເອກະສານ. ບັນດາຄົນເຈັບສາມາດຍື່ນຄໍາຮ້ອງຂໍສະໝັກໂຄງການ DFA ໄດ້ກ່ອນໜ້າ ຫຼື ຫຼັງຈາກການດູແລຂອງພວກເຂົາໄດ້ດົນເຖິງ 12 ເດືອນ. ແຫຼ່ງຂໍ້ມູນກ່ຽວກັບໂຄງການ ແລະ ວິທີການຍື່ນຄໍາຮ້ອງຂໍສະໝັກ DFA ແມ່ນປະກອບມີ:

Proprietary Information. Kaiser Permanente. All rights reserved.

a. **ທາງອອນລາຍ.**

ບັນດາຄົນເຈັບສາມາດເບິ່ງ ແລະ ດາວໂຫຼດສຳເນົາເອເລັກໂຕນິກຂອງຂໍ້ມູນກ່ຽວກັບໂຄງການໄດ້ຈາກເວັບໄຊ DFA ທີ່ kp.org/dfa (ເປັນພາສາອັງກິດ).

b. **ແບບເຊິ່ງໜ້າ.**

ຂໍ້ມູນກ່ຽວກັບໂຄງການແມ່ນມີໃຫ້ແລ້ວ ແລະ ໃບຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວແມ່ນສາມາດໄປສົ່ງໄດ້ດ້ວຍຕົນເອງທີ່ຄລີນິກປົວແຂ້ວຂອງ KP ແຫ່ງໃດກໍໄດ້.

c. **ທາງໂທລະສັບ.**

ບັນດາທີ່ປຶກສາສາມາດໃຫ້ຂໍ້ມູນ, ກວດສອບເງື່ອນໄຂການມີສິດໄດ້ຮັບ DFA ແລະ ຊ່ວຍບັນດາຄົນເຈັບຍື່ນຄຳຮ້ອງຂໍສະໝັກ DFA. ໂທຫາເບີ:

1-503-813-2000 ຫຼື 1-800-813-2000 ຫຼື TTY: 711

d. **ທາງໄປສະນີ.**

ບັນດາຄົນເຈັບສາມາດຮ້ອງຂໍຂໍ້ມູນ ແລະ ຍື່ນຄຳຮ້ອງຂໍສະໝັກ DFA ໂດຍການສົ່ງຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ ໄປທີ່:

Kaiser Permanente DFA Program
500 NE Multnomah Street, Suite 100
Portland, Oregon 97232
Attn: Financial Counseling Department

e. **ທາງແຟັກ.**

ໃບຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນສຳເລັດແລ້ວ ແມ່ນສາມາດສົ່ງແຟັກໄປທີ່ເບີ 1-877-829-3547.

**5.3 ຂໍ້ມູນທີ່ຕ້ອງການ ໃນການຍື່ນຄຳຮ້ອງຂໍສະໝັກ DFA.**

ຈຳເປັນຕ້ອງມີຂໍ້ມູນສ່ວນຕົວ, ຂໍ້ມູນການເງິນ ແລະ ຂໍ້ມູນອື່ນໆທີ່ຄົບຖ້ວນ ເພື່ອກວດສອບສະຖານະພາບທາງການເງິນຂອງຄົນເຈັບ ເພື່ອພິຈາລະນາເບິ່ງວ່າຜູ້ກ່ຽວມີເງື່ອນໄຂໄດ້ຮັບໂຄງການ DFA ຫຼື ບໍ່. ສະຖານະພາບທາງການເງິນຂອງຄົນເຈັບຈະຖືກກວດສອບທຸກຄັ້ງທີ່ຜູ້ກ່ຽວຍື່ນຄຳຮ້ອງຂໍສະໝັກການຊ່ວຍເຫຼືອ.

Proprietary Information. Kaiser Permanente. All rights reserved.

**5.3.1 ການສະໜອງຂໍ້ມູນທາງດ້ານການເງິນ.**

ບັນດາຄົນເຈັບຕ້ອງລະບຸຂໍ້ມູນຂະໜາດຄົວເຮືອນ ແລະ ລາຍໄດ້ມາພ້ອມກັບໃບຄໍາຮ້ອງຂໍສະໝັກ DFA ຂອງຕົນ. ແນວໃດກໍຕາມ, ການສົ່ງເອກະສານລາຍໄດ້ເພື່ອກວດສອບສະຖານະພາບທາງການເງິນແມ່ນບໍ່ບັງຄັບເວັ້ນເສຍແຕ່ວ່າ KP ຈະຮ້ອງຂໍເປັນພິເສດເທົ່ານັ້ນ.

**5.3.1.1 ການຢັ້ງຢືນສະຖານະທາງດ້ານການເງິນ ໂດຍບໍ່ມີເອກະສານລາຍໄດ້.**

ຖ້າຄົນເຈັບບໍ່ສະໜອງເອກະສານລາຍໄດ້, ກໍຈະມີການກວດສອບສະຖານະພາບທາງດ້ານການເງິນຂອງຜູ້ກ່ຽວ ໂດຍໃຊ້ແຫຼ່ງຂໍ້ມູນອື່ນ. ຖ້າແຫຼ່ງຂໍ້ມູນເຫຼົ່ານີ້ບໍ່ສາມາດຢືນຢັນສະຖານະພາບທາງດ້ານການເງິນຂອງຜູ້ກ່ຽວໄດ້, ໂຄງການອາດຈະຮ້ອງຂໍໃຫ້ຄົນເຈັບສະໜອງໃບຮັບເງິນເດືອນ ຫຼື ໃບແຈ້ງເສຍພາສີສະບັບຫຼ້າສຸດຂອງຕົນ. ນອກຈາກນັ້ນ, ຄົນເຈັບກໍຍັງສາມາດສົ່ງເອກະສານລາຍໄດ້ອື່ນໆ ທີ່ໄດ້ລະບຸໄວ້ໃນໃບຄໍາຮ້ອງຂໍສະໝັກໂຄງການ DFA ໄດ້ອີກດ້ວຍ. ຖ້າຄົນເຈັບໄດ້ຮັບການອະນຸມັດສໍາລັບ DFA ແລ້ວ, ຜູ້ກ່ຽວຈະໄດ້ຮັບແຈ້ງການເປັນລາຍລັກອັກສອນ ແລະ ສາມາດເລືອກທີ່ຈະປະຕິເສດໂຄງການ DFA ຫຼື ໃຫ້ເອກະສານລາຍໄດ້ ເພື່ອຂໍຄວາມຊ່ວຍເຫຼືອເພີ່ມເຕີມໄດ້.

**5.3.1.2 ການຢັ້ງຢືນສະຖານະທາງດ້ານການເງິນ ໂດຍມີເອກະສານລາຍໄດ້.**

ຖ້າຄົນເຈັບສະໜອງເອກະສານລາຍໄດ້, ສະຖານະພາບທາງດ້ານການເງິນຂອງຜູ້ກ່ຽວກໍຈະອີງໃສ່ຂໍ້ມູນທີ່ໃຫ້ມາ. ເອກະສານລາຍໄດ້ທີ່ບັນດາຄົນເຈັບສົ່ງມາ ສໍາລັບການພິຈາລະນາຕັດສິນການມີສິດໄດ້ຮັບ DFA ຈະບໍ່ຖືກນໍາມາໃຊ້ສໍາລັບກິດຈະກໍາການເກັບໜີ້.

Proprietary Information. Kaiser Permanente. All rights reserved.

**5.3.2 ການໃຫ້ຂໍ້ມູນທີ່ຄົບຖ້ວນ.**

ການມີສິດໄດ້ຮັບໂຄງການ DFA ຈະໄດ້ຮັບການພິຈາລະນາຕັດສິນ ເມື່ອໄດ້ຮັບຂໍ້ມູນສ່ວນຕົວ, ຂໍ້ມູນການເງິນ ແລະ ຂໍ້ມູນອື່ນໆ ທີ່ຮ້ອງຂໍທັງໝົດແລ້ວ. ຖ້າຄົນເຈັບບໍ່ສົ່ງຂໍ້ມູນທີ່ຈໍາເປັນທັງໝົດ, ຜູ້ກ່ຽວຈະໄດ້ຮັບແຈ້ງການແບບເຊິ່ງໜ້າ, ທາງໄປສະນີ ຫຼື ທາງໂທລະສັບ. ຄົນເຈັບມີເວລາ 30 ວັນເພື່ອສົ່ງຂໍ້ມູນທີ່ຂາດຫາຍໄປ ນັບຈາກວັນທີ່ຜູ້ກ່ຽວໄດ້ຮັບແຈ້ງ. ທ່ານອາດຈະຖືກປະຕິເສດ DFA ຖ້າຂໍ້ມູນບໍ່ຄົບຖ້ວນ.

**5.3.3 ການບໍ່ມີຂໍ້ມູນທີ່ຮ້ອງຂໍ.**

ຖ້າຄົນເຈັບບໍ່ມີຂໍ້ມູນທີ່ຖືກຮ້ອງຂໍຢູ່ໃນໃບສະໝັກໂຄງການ, ຜູ້ກ່ຽວສາມາດຕິດຕໍ່ KFHPH/H ເພື່ອປຶກສາຫາລືກ່ຽວກັບຂໍ້ມູນອື່ນໆທີ່ເຂົາເຈົ້າສາມາດນໍາໃຊ້ເພື່ອສະແດງໃຫ້ເຫັນວ່າຕົນເອງມີສິດໄດ້ຮັບ.

**5.3.4 ການບໍ່ມີຂໍ້ມູນລາຍຮັບ.**

ຄົນເຈັບສາມາດໃຫ້ຂໍ້ມູນທາງດ້ານການເງິນຂັ້ນພື້ນຖານ (ເຊັ່ນ: ລາຍໄດ້ ແລະ ແຫຼ່ງທີ່ມາຂອງລາຍໄດ້) ແລະ ອະທິບາຍສະຖານະພາບທາງດ້ານການເງິນຂອງຕົນໄດ້ ຖ້າ:

- ບໍ່ສາມາດກວດສອບສະຖານະພາບທາງການເງິນຂອງຜູ້ກ່ຽວ ໂດຍໃຊ້ແຫຼ່ງຂໍ້ມູນອື່ນໄດ້.
- ບໍ່ມີຂໍ້ມູນລາຍໄດ້ທີ່ຮ້ອງຂໍ.
- ບໍ່ມີເອກະສານອື່ນໆ ທີ່ສາມາດສະແດງໃຫ້ເຫັນວ່າຜູ້ກ່ຽວມີເງື່ອນໄຂໄດ້ຮັບ.

ຂໍ້ມູນພື້ນຖານທາງດ້ານການເງິນແມ່ນຕ້ອງການ ຖ້າຄົນເຈັບມີສະພາບດັ່ງຕໍ່ໄປນີ້:

- ບໍ່ມີທີ່ຢູ່ອາໄສ ຫຼື ໄດ້ຮັບການດູແລຈາກຄລີນິກສໍາລັບຄົນທີ່ບໍ່ມີທີ່ຢູ່ອາໄສ.
- ບໍ່ມີລາຍໄດ້, ບໍ່ໄດ້ຮັບໃບແຈ້ງເງິນເດືອນແບບເປັນທາງການຈາກອົງກອນ (ຍົກເວັ້ນ ຖ້າເປັນຜູ້ປະກອບອາຊີບສ່ວນຕົວ), ໄດ້ຮັບຂອງຂວັນເປັນເງິນສົດ, ຫຼື ບໍ່ຈໍາເປັນຕ້ອງຍື່ນແບບເສຍພາສີໃນປີຜ່ານມາ.

Proprietary Information. Kaiser Permanente. All rights reserved.

**5.3.5 ການຮ່ວມມືຂອງຄົນເຈັບ.**

ຄົນເຈັບຕ້ອງພະຍາຍາມຢ່າງສຸດຄວາມສາມາດ ເພື່ອໃຫ້ຂໍ້ມູນທີ່ຮ້ອງຂໍທັງໝົດ. ຖ້າຜູ້ກູ້ງອບໍ່ໃຫ້ຂໍ້ມູນທີ່ຮ້ອງຂໍ, ກໍຍັງຄົງມີການກວດສອບສະຖານະການຂອງຜູ້ກູ້ງວ ເພື່ອຕັດສິນໃຈວ່າຜູ້ກູ້ງວມີເງື່ອນໄຂໄດ້ຮັບ ຫຼື ບໍ່.

**5.4 ການຜ່ານເງື່ອນໄຂເບື້ອງຕົ້ນແລ້ວ.**

ຖ້າຄົນເຈັບບັນລຸໄດ້ຕາມເງື່ອນໄຂໃດໜຶ່ງຕໍ່ໄປນີ້ ກໍຈະຖືວ່າຜູ້ກູ້ງວຜ່ານເງື່ອນໄຂເບື້ອງຕົ້ນແລ້ວ ແລະ ຈະໄດ້ຮັບ DFA ສໍາລັບການບໍລິການທີ່ມີສິດໄດ້ຮັບທັງໝົດ:

- ໄດ້ລົງທະບຽນເຂົ້າ ຫຼື ອາດຈະມີສິດໄດ້ຮັບໂຄງການຄຸ້ມຄອງສຸຂະພາບຂອງລັດຖະບານ ເຊັ່ນ: Medicaid, ໂຄງການອຸດໜູນຜູ້ມີລາຍໄດ້ຕໍ່າ (LIS) ຂອງ Medicare ຫຼື ການຄຸ້ມຄອງທີ່ໄດ້ຮັບເງິນອຸດໜູນຈາກ Health Benefit Exchange.
- ໄດ້ລົງທະບຽນເຂົ້າໃນໂຄງການຊ່ວຍເຫຼືອສາທາລະນະຂອງລັດຖະບານ ເຊັ່ນ: ໂຄງການແມ່ຍິງ, ເດັກທາລົກ ແລະ ເດັກນ້ອຍ, ໂຄງການດ້ານໂພຊະນາການເສີມ ແລະ ການຊ່ວຍເຫຼືອ, ໂຄງການຊ່ວຍເຫຼືອດ້ານພະລັງງານສໍາລັບຄົວເຮືອນທີ່ມີລາຍໄດ້ຕໍ່າ ຫຼື ໂຄງການອາຫານທ່ຽງຟຣີ/ຫຼຸດລາຄາ.
- ກໍາລັງດໍາລົງຊີວິດໃນເຮືອນສໍາລັບຜູ້ທີ່ມີລາຍໄດ້ຕໍ່າ ຫຼື ໄດ້ຮັບເງິນອຸດໜູນ.

**5.5 ເກນການມີສິດໄດ້ຮັບໂຄງການ.**

ຄົນເຈັບທີ່ມີລາຍໄດ້ລວມຍອດຂອງຄົວເຮືອນໜ້ອຍກວ່າ ຫຼື ເທົ່າກັບ 400% ຂອງຄໍາແນະນໍາວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ (FPG) ແມ່ນມີສິດໄດ້ຮັບ DFA. ຊັບສິນຕ່າງໆຈະບໍ່ຖືກນໍາມາພິຈາລະນາເປັນລາຍໄດ້.

**5.5.1 ຂະໜາດຄົວເຮືອນ ແລະ ລາຍໄດ້.**

ຂໍ້ກໍານົດກ່ຽວກັບລາຍໄດ້ ມີຜົນບັງຄັບໃຊ້ກັບບັນດາສະມາຊິກໃນຄົວເຮືອນຄອບຄົວ ຫຼື ຄົວເຮືອນຂອງຄົນເຈັບ ແມ່ນໝາຍເຖິງ:

a) ສໍາລັບບຸກຄົນທີ່ມີອາຍຸ 18 ປີຂຶ້ນໄປ, ຄູ່ສົມລົດ, ຄູ່ຮັກ ແລະ ເດັກໃນອຸປະຖໍາທີ່ມີອາຍຸຕໍ່າກວ່າ 21 ປີ ຫຼື ອາຍຸໃດກໍ່ຕາມ ຖ້າພິການ, ບໍ່ວ່າຈະອາໄສຢູ່ໃນເຮືອນ ຫຼື ບໍ່ກໍ່ຕາມ. ແນວໃດກໍ່ຕາມ, ສໍາລັບບຸກຄົນທີ່ມີອາຍຸ 18 ຫາ 20 ປີ, ບັນດາສະມາຊິກໃນ

ຄອບຄົວຍັງລວມເຖິງພໍ່ແມ່, ຍາດພີ່ນ້ອງທີ່ເປັນຜູ້ດູແລ ແລະ ເດັກໃນອຸປະຖໍາອື່ນໆຂອງພໍ່ແມ່ ຫຼື ຍາດພີ່ນ້ອງທີ່ເປັນຜູ້ດູແລ ທີ່ມີອາຍຸຕໍ່າກວ່າ 21 ປີ ຫຼື ອາຍຸໃດກໍຕາມຖ້າພິການ.

b) ສໍາລັບບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ, ພໍ່ແມ່, ຍາດພີ່ນ້ອງທີ່ເປັນຜູ້ດູແລ ແລະ ເດັກຄົນອື່ນໆທີ່ມີອາຍຸຕໍ່າກວ່າ 21 ປີ ຫຼື ອາຍຸໃດກໍຕາມຖ້າພິການ.

**5.5.2 ຕາຕະລາງກໍານົດສ່ວນຫຼຸດ.**

ຄົນເຈັບທີ່ຜ່ານເງື່ອນໄຂການມີສິດໄດ້ຮັບ ຈະໄດ້ຮັບສ່ວນຫຼຸດແບບຂັ້ນບັນໄດ (Sliding Scale Discount) ຕໍ່ຄ່າໃຊ້ຈ່າຍໃນການບໍລິການດູແລແຂ້ວຂອງ KP ທີ່ຕົນເອງມີສິດໄດ້ຮັບ. ຈໍານວນສ່ວນຫຼຸດຂອງ DFA ແມ່ນອີງໃສ່ວ່າ ລາຍໄດ້ຄົວເຮືອນຂອງຄົນເຈັບຈະຕົກຢູ່ບ່ອນໃດ ພາຍໃນຄໍາແນະນໍາວ່າດ້ວຍລະດັບຄວາມທຸກຍາກຂອງລັດຖະບານກາງ (FPL):

| ຈໍານວນເປີເຊັນຂອງຄໍາແນະນໍາວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ | | | ສ່ວນຫຼຸດສໍາລັບການຊ່ວຍເຫຼືອທາງການເງິນ |
|---|---|---|---|
| ຈາກ | | ເຖິງ | |
| 0% | - | 200% | ສ່ວນຫຼຸດ 100% (ເຕັມສ່ວນ) |
| 201% | - | 300% | ສ່ວນຫຼຸດ 75% (ບາງສ່ວນ) |
| 301% | - | 350% | ສ່ວນຫຼຸດ 50% (ບາງສ່ວນ) |
| 351% | - | 400% | ສ່ວນຫຼຸດ 25% (ບາງສ່ວນ) |

ຖ້າຄົນເຈັບໄດ້ຮັບການອະນຸມັດໃຫ້ໄດ້ຮັບ DFA ບາງສ່ວນ, ແມ່ນຈະຕ້ອງໄດ້ຈ່າຍສ່ວນທີ່ເຫຼືອໃຫ້ເຕັມຈໍານວນ ຫຼື ຄົນເຈັບມີຕົວເລືອກໃນການກໍານົດແຜນການຈ່າຍເງິນແບບບໍ່ມີດອກເບ້ຍໄດ້.

## 5.6 ການປະຕິເສດ ແລະ ການອຸທອນ

**5.6.1 ການປະຕິເສດ.**

ຖ້າຄົນເຈັບຍື່ນຄໍາຮ້ອງຂໍໂຄງການ DFA ແລະ ບໍ່ສາມາດບັນລຸໄດ້ຕາມເກນການມີສິດໄດ້ຮັບ, ຜູ້ກ່ຽວຈະໄດ້ຮັບການແຈ້ງເປັນລາຍລັກອັກສອນວ່າຄໍາຮ້ອງຂໍຂອງຜູ້ກ່ຽວຖືກປະຕິເສດ.

Proprietary Information. Kaiser Permanente. All rights reserved.

**5.6.2 ວິທີການອຸທອນການປະຕິເສດ DFA.**

ບັນດາຄົນເຈັບທີ່ຖືກປະຕິເສດ DFA ຫຼື ຄິດວ່າຕົນມີເງື່ອນໄຂໄດ້ຮັບຄວາມຊ່ວຍເຫຼືອຫຼາຍກວ່ານັ້ນ ສາມາດຂໍອຸທອນການຕັດສິນໃຈນັ້ນໆໄດ້. ຄົນເຈັບຄວນອຸທອນ ຖ້າຜູ້ກ່ຽວ:

- ຍັງບໍ່ທັນໄດ້ສະໜອງເອກະສານລາຍໄດ້ມາກ່ອນ ຫຼື
- ລາຍໄດ້ຄົວເຮືອນຂອງຜູ້ກ່ຽວມີການປ່ຽນແປງ.

ຄໍາແນະນໍາສໍາລັບການອຸທອນແມ່ນມີຢູ່ໃນໜັງສືປະຕິເສດ ແລະ ໜັງສືອະນຸມັດ DFA ແລະ ຢູ່ໃນເວັບໄຊຂອງໂຄງການ DFA. ຄໍາຮ້ອງຂໍອຸທອນຈະໄດ້ຮັບການກວດສອບໂດຍຮອງຜູ້ອໍານວຍການໃຫຍ່, Central Patient Access and Balance Collections (ໜ່ວຍງານການເຂົ້າເຖິງຄົນເຈັບ ແລະ ການເກັບໜີ້ຂັ້ນສູນກາງ). ຄົນເຈັບຈະໄດ້ຮັບການແຈ້ງໃຫ້ຊາບເປັນລາຍລັກອັກສອນກ່ຽວກັບຜົນການອຸທອນຂອງຜູ້ກ່ຽວ. ການຕັດສິນໃຈຕໍ່ການອຸທອນທັງໝົດແມ່ນເປັນຂັ້ນສຸດທ້າຍ.

**5.7 ໂຄງສ້າງເງິນຊ່ວຍເຫຼືອ.**

ສ່ວນຫຼຸດສໍາລັບ DFA ແມ່ນມີຜົນບັງຄັບໃຊ້ກັບໃບບິນຮຽກເກັບເງິນທີ່ຍັງຄ້າງຈ່າຍສໍາລັບການບໍລິການດູແລແຂ້ວຂອງ KP ທີ່ມີສິດໄດ້ຮັບ ນັບຈາກວັນທີທີ່ລະບຸໄວ້ໃນໜັງສືມອບເງິນຊ່ວຍເຫຼືອ ຈົນຄົບໄລຍະເວລາການຊ່ວຍເຫຼືອທີ່ມີສິດໄດ້ຮັບທີ່ກໍານົດໂດຍ KP (ເບິ່ງຂໍ້ 5.7.2 ໄລຍະເວລາທີ່ມີສິດໄດ້ຮັບເງິນຊ່ວຍເຫຼືອ). ເພື່ອເປັນການເອື້ອອໍານວຍ, DFA ຍັງຈະມີຜົນບັງຄັບໃຊ້ກັບໃບບິນຮຽກເກັບເງິນທີ່ຍັງຄ້າງຈ່າຍ ສໍາລັບການບໍລິການດູແລແຂ້ວຂອງ KP ທີ່ມີສິດໄດ້ຮັບ ທີ່ໄດ້ຮັບໃນຊ່ວງ 12 ເດືອນກ່ອນວັນທີທີ່ຄົນເຈັບໄດ້ຮັບການອະນຸມັດສໍາລັບໂຄງການ DFA.

**5.7.1 ພື້ນຖານຂອງເງິນຊ່ວຍເຫຼືອ.**

ສ່ວນຫຼຸດສໍາລັບ DFA ແມ່ນມີຜົນບັງຄັບໃຊ້ກັບຄ່າໃຊ້ຈ່າຍຕ່າງໆຂອງຄົນເຈັບ ໂດຍອີງໃສ່ວ່າຄົນເຈັບມີການຄຸ້ມຄອງການດູແລແຂ້ວ ຫຼື ບໍ່ ແລະ ອີງໃສ່ລາຍໄດ້ຄົວເຮືອນຂອງຜູ້ກ່ຽວ.

Proprietary Information. Kaiser Permanente. All rights reserved.

**5.7.1.1 ຄົນເຈັບທີ່ມີສິດໄດ້ຮັບທີ່ບໍ່ມີການຄຸ້ມຄອງການດູແລແຂ້ວ (ບໍ່ມີປະກັນໄພ).**

ຄົນເຈັບທີ່ບໍ່ມີປະກັນໄພທີ່ມີສິດໄດ້ຮັບ ຈະໄດ້ຮັບ DFA ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບສຳລັບການບໍລິການທີ່ມີສິດໄດ້ຮັບ ຫຼັງຈາກນຳໃຊ້ສ່ວນຫຼຸດທີ່ກ່ຽວຂ້ອງທັງໝົດທັງໝົດແລ້ວ.

**5.7.1.2 ຄົນເຈັບທີ່ມີສິດໄດ້ຮັບທີ່ມີການຄຸ້ມຄອງການດູແລແຂ້ວ (ມີປະກັນໄພ).**

ຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບ ຈະໄດ້ຮັບ DFA ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບສຳລັບການບໍລິການທີ່ມີສິດໄດ້ຮັບທັງໝົດ. ຄົນເຈັບຈຳຕ້ອງໄດ້ສະໜອງເອກະສານຕ່າງໆ ເຊັ່ນ: ຄຳອະທິບາຍກ່ຽວກັບສິດທິປະໂຫຍດ (EOB) ເພື່ອສະແດງໃຫ້ເຫັນສິ່ງທີ່ປະກັນໄພບໍ່ຄຸ້ມຄອງ. ນອກຈາກນັ້ນ, ຄົນເຈັບກໍຍັງຕ້ອງຂໍອຸທອນຕໍ່ທຸກການຮຽກທວງທີ່ຖືກປະຕິເສດຕໍ່ບໍລິສັດປະກັນໄພຂອງຜູ້ກ່ຽວ ແລະ ສະໜອງຫຼັກຖານການປະຕິເສດອີກດ້ວຍ.

**5.7.1.2.1 ການຈ່າຍເງິນທີ່ໄດ້ຮັບຈາກບໍລິສັດປະກັນໄພ.**

ບັນດາຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບ ຕ້ອງຈ່າຍຈຳນວນເງິນໃດກໍຕາມທີ່ຕົນໄດ້ຮັບຈາກປະກັນໄພໃຫ້ແກ່ KFHP/H ສຳລັບການບໍລິການທີ່ KFHP/H ສະໜອງໃຫ້.

**5.7.1.3 ການເບີກເງິນຄືນຈາກການຊຳລະບັນຊີ.**

KFHPNW ຈະດຳເນີນການຮຽກຄ່າຊົດເຊີຍຈາກການຊຳລະຄ່າຄວາມຮັບຜິດຊອບຂອງບຸກຄົນທີສາມ / ການຊຳລະສິນທົດແທນຈາກປະກັນໄພສ່ວນຕົວ, ຜູ້ຈ່າຍເງິນ ຫຼື ບຸກຄົນທີ່ມີຄວາມຮັບຜິດຊອບຕາມກົດໝາຍອື່ນໆ ຕາມຄວາມເໝາະສົມ.

Proprietary Information. Kaiser Permanente. All rights reserved.

**5.7.2 ໄລຍະເວລາທີ່ມີສິດໄດ້ຮັບເງິນຊ່ວຍເຫຼືອ.**

ໄລຍະເວລາທີ່ມີສິດໄດ້ຮັບ DFA ຈະເລີ່ມຈາກວັນທີໃນໜັງສືມອບເງິນຊ່ວຍເຫຼືອ ແລະ ໃຊ້ໄດ້ເຖິງ 180 ວັນ ສໍາລັບການບໍລິການຕິດຕາມອາການທີ່ມີສິດໄດ້ຮັບ.

**5.7.3 ການຖອນ ຫຼື ການດັດແກ້ເງິນຊ່ວຍເຫຼືອ.**

KFHPNW ອາດຈະຖອນ ຫຼື ດັດແກ້ເງິນຊ່ວຍເຫຼືອຂອງ DFA ໃນບາງສະຖານະການ ຕາມດຸນພິນິດຂອງຕົນ. ສະຖານະການຕ່າງໆ ປະກອບດ້ວຍ:

**5.7.3.1 ການສໍ້ໂກງ, ການລັກ ຫຼື ການປ່ຽນແປງສະຖານະທາງດ້ານການເງິນ.**

ກໍລະນີການສໍ້ໂກງ, ການບິດເບືອນຄວາມຈິງ, ການໂຈລະກໍາ, ການປ່ຽນແປງສະຖານະການທາງດ້ານການເງິນຂອງຄົນເຈັບ ຫຼື ສະຖານະການອື່ນໆ ທີ່ສົ່ງຜົນກະທົບຕໍ່ຄວາມຊື່ສັດຂອງໂຄງການ DFA.

**5.7.3.2 ແຫຼ່ງການຈ່າຍເງິນອື່ນໆທີ່ລະບຸໄດ້.**

ການຄຸ້ມຄອງການດູແລແຂ້ວ ຫຼື ແຫຼ່ງການຈ່າຍເງິນອື່ນໆທີ່ລະບຸໄດ້ ຫຼັງຈາກຄົນເຈັບໄດ້ຮັບເງິນຊ່ວຍເຫຼືອຂອງ DFA ຈະເຮັດໃຫ້ມີການຮຽກເກັບຄ່າສໍາລັບການບໍລິການທີ່ມີສິດໄດ້ຮັບທີ່ຈະຖືກຮຽກເກັບຍ້ອນຫຼັງໄດ້. ຖ້າກໍລະນີນີ້ເກີດຂຶ້ນ, ຄົນເຈັບຈະບໍ່ໄດ້ຖືກຮຽກເກັບເງິນສໍາລັບສ່ວນນັ້ນຂອງໃບບິນ
(1) ທີ່ຄົນເຈັບຕ້ອງຮັບຜິດຊອບດ້ວຍຕົນເອງ ແລະ
(2) ທີ່ບໍ່ໄດ້ຮັບການຈ່າຍໃຫ້ໂດຍການຄຸ້ມຄອງການດູແລແຂ້ວ ຫຼື ແຫຼ່ງການຈ່າຍເງິນອື່ນໆຂອງຜູ້ກ່ຽວ.

**5.7.3.3 ການປ່ຽນແປງຕໍ່ລາຍໄດ້ຂອງຄົວເຮືອນ.**

ຄົນເຈັບທີ່ປະສົບກັບການປ່ຽນແປງຕໍ່ລາຍໄດ້ຂອງຄົວເຮືອນຈະຖືກຮ້ອງຂໍໃຫ້ຍື່ນຄໍາຮ້ອງຂໍສະໝັກໂຄງການ DFA ຄືນໃໝ່.

Proprietary Information. Kaiser Permanente. All rights reserved.

| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
|---|---|
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອຳນວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອຳນວຍການຝ່າຍທັນຕະກຳບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**11 ຈາກ 18** |

**5.8 ການດຳເນີນການເກັບໜີ້**

**5.8.1 ການຮຽກເກັບເງິນຄ່າໃບບິນທີ່ຍັງຄ້າງຈ່າຍ ສຳລັບການບໍລິການດູແລແຂ້ວຂອງ KP.**

ໃບບິນຮຽກເກັບເງິນທີ່ຍັງຄ້າງຈ່າຍ ສຳລັບການບໍລິການດູແລແຂ້ວຂອງ KP ແມ່ນມີກຳນົດຈ່າຍພາຍໃນ 30 ວັນ ນັບຈາກວັນທີທີ່ໄດ້ຮັບໃບບິນຮຽກເກັບເງິນສະບັບທຳອິດຈາກ KP. ເພື່ອຫຼີກເວັ້ນກິດຈະກຳການເກັບໜີ້ໃນຕໍ່ໜ້າ:

- ຈະຕ້ອງໄດ້ຮັບ ແລະ ດຳເນີນການຊຳລະຢ່າງເຕັມຈຳນວນ.
- ໄດ້ຍື່ນຄຳຮ້ອງຂໍສະໝັກ DFA ໄປແລ້ວ ແລະ ພວມຢູ່ລະຫວ່າງການດຳເນີນການຢູ່ ຫຼື DFA ໄດ້ອະນຸມັດແລ້ວ.
- ໄດ້ກຳນົດແຜນການຈ່າຍເງິນຂຶ້ນມາແລ້ວ ແລະ ຢູ່ໃນສະຖານະທີ່ດີ.

**5.8.2 ຄວາມພະຍາຍາມໃນການແຈ້ງການທີ່ສົມເຫດສົມຜົນ.**

KFHPNW ຫຼື ໜ່ວຍງານເກັບໜີ້ສິນ ທີ່ເຮັດໜ້າທີ່ໃນນາມຂອງຕົນ ຈະໃຊ້ຄວາມຄວາມພະຍາຍາມທີ່ສົມເຫດສົມຜົນໃນການແຈ້ງໃຫ້ຄົນເຈັບທີ່ມີຍອດຄ້າງຊຳລະກາຍກຳນົດ ຫຼື ມີໃບບິນຮຽກເກັບເງິນຄ້າງຈ່າຍ ສຳລັບການບໍລິການດູແລແຂ້ວຂອງ KP ໃຫ້ຮັບຊາບກ່ຽວກັບໂຄງການ DFA. ຄວາມພະຍາຍາມໃນການແຈ້ງການທີ່ສົມເຫດສົມຜົນ ປະກອບດ້ວຍ:

**5.8.2.1 ແຈ້ງການເປັນລາຍລັກອັກສອນກ່ຽວກັບໃບບິນຮຽກເກັບເງິນທີ່ຄ້າງຈ່າຍ.**

ການສົ່ງແຈ້ງການເປັນລາຍລັກອັກສອນສະບັບໜຶ່ງພາຍໃນ 180 ວັນ ນັບຈາກມື້ທີ່ໄດ້ອອກໃບບິນຮຽກເກັບເງິນຄັ້ງທຳອິດຈາກ KP ໂດຍແຈ້ງບອກໃຫ້ຝ່າຍທີ່ຮັບຜິດຊອບໃບບິນຮຽກເກັບເງິນທີ່ຄ້າງຈ່າຍສຳລັບການບໍລິການດູແລແຂ້ວຂອງ KP ໃຫ້ຮູ້ວ່າ ມີການໂຄງການ DFA ທີ່ສາມາດຊ່ວຍເຫຼືອຜູ້ທີ່ມີເງື່ອນໄຂໄດ້ຮັບແລ້ວ.

Proprietary Information. Kaiser Permanente. All rights reserved.

**5.8.2.2 ແຈ້ງການເປັນລາຍລັກອັກສອນກ່ຽວກັບການດໍາເນີນການເກັບໜີ້ທີ່ອະນຸຍາດ.**

ການສົ່ງແຈ້ງການເປັນລາຍລັກອັກສອນພ້ອມກັບລາຍການການດໍາເນີນການເກັບໜີ້ທີ່ KFHPNW ຫຼື ໜ່ວຍງານເກັບໜີ້ຕັ້ງໃຈທີ່ຈະເລີ່ມປະຕິບັດເພື່ອໃຫ້ຊໍາລະໃບບິນຮຽກເກັບເງິນທີ່ຄ້າງຊໍາລະ ສໍາລັບການບໍລິການດູແລແຂ້ວຂອງ KP ແລະ ກໍານົດເວລາສໍາລັບການດໍາເນີນການດັ່ງກ່າວ, ເຊິ່ງຈະບໍ່ດໍາເນີນການກ່ອນຄົບ 30 ວັນ ນັບຈາກວັນທີອອກແຈ້ງການເປັນລາຍລັກອັກສອນ.

**5.8.2.3 ການແຈ້ງເຕືອນແບບປາກເປົ່າ.**

ການພະຍາຍາມແຈ້ງຝ່າຍທີ່ຮັບຜິດຊອບໃບບິນຮຽກເກັບເງິນຄ້າງຈ່າຍ ສໍາລັບການບໍລິການດູແລແຂ້ວຂອງ KP ແບບປາກເປົ່າໃຫ້ຮູ້ກ່ຽວກັບນະໂຍບາຍ DFA ແລະ ວິທີການຮັບເອົາການຊ່ວຍເຫຼືອໂດຍຜ່ານຂະບວນການຍື່ນຄໍາຮ້ອງຂໍສະໝັກ DFA.

**5.8.2.4 ການພິຈາລະນາຕັດສິນການມີສິດໄດ້ຮັບ DFA ຕາມການຮ້ອງຂໍ.**

ການພິຈະລະນາຕັດສິນການມີສິດໄດ້ຮັບ DFA ຕາມການຮ້ອງຂໍ, ກ່ອນກາຍກໍານົດຈ່າຍ ຫຼື ໃບບິນຮຽກເກັບເງິນຄ້າງຊໍາລະ ສໍາລັບການບໍລິການດູແລແຂ້ວຂອງ KP ຈະຖືກໂອນໄປໃຫ້ໜ່ວຍງານເກັບໜີ້.

**5.8.3 ການນໍາສົ່ງໜີ້ຂອງຄົນເຈັບໄປໃຫ້ໜ່ວຍງານເກັບໜີ້.**

ໃບບິນທີ່ຍັງບໍ່ທັນຊໍາລະສໍາລັບຄ່າບໍລິການດູແລແຂ້ວຂອງ KP ອາດຈະຖືກພິຈາລະນາເພື່ອການປັບປຸງໜີ້ສິນ ແລະ ການສົ່ງຕໍ່ໃຫ້ອົງການເກັບໜີ້ ຫຼັງຈາກທີ່ມີການດໍາເນີນການເກັບໜີ້ ແລະ ຄວາມພະຍາຍາມແຈ້ງເຕືອນຢ່າງຕັ້ງໜ້າໄດ້ເກີດຂຶ້ນ ແລະ ຄົບກໍານົດ 180 ວັນນັບຕັ້ງແຕ່ການອອກໃບບິນເບື້ອງຕົ້ນ.

Proprietary Information. Kaiser Permanente. All rights reserved.

**5.8.3.1 ສິດອຳນາດໃນການນຳສົ່ງໜີ້ຂອງຄົນເຈັບ.**

ໜີ້ຂອງຄົນເຈັບຈະຖືກນຳສົ່ງໄປໃຫ້ໜ່ວຍງານເກັບໜີ້ພາຍໃຕ້ສິດອຳນາດຂອງຮອງຜູ້ອຳນວຍການໃຫຍ່, Central Patient Access and Balance Collections (ໜ່ວຍງານການເຂົ້າເຖິງຄົນເຈັບ ແລະ ການເກັບໜີ້ຂັ້ນສູນກາງ).

**5.8.3.2 ການມອບໝາຍໃຫ້ຜູ້ບໍລິການເກັບໜີ້ດຳເນີນການຕິດຕາມທວງໜີ້.**

ຝ່າຍທີ່ຮັບຜິດຊອບໃບບິນຮຽກເກັບເງິນຄ້າງຈ່າຍ ສຳລັບການບໍລິການດູແລແຂ້ວຂອງ KP ບາງລາຍ ຈະຖືກມອບໝາຍໃຫ້ຜູ້ບໍລິການເກັບໜີ້ ເພື່ອດຳເນີນການຕິດຕາມທວງໜີ້ (ເຊັ່ນ: ການກວດສອບທີ່ຢູ່) ກ່ອນທີ່ຈະດຳເນີນກິດຈະກຳເກັບໜີ້ເສຍ.

**5.8.4 ການດຳເນີນການເກັບໜີ້ທີ່ຖືກລະງັບ.**

KFHPNW ຈະບໍ່ດຳເນີນການ ຫຼື ບໍ່ອະນຸຍາດໃຫ້ໜ່ວຍງານເກັບໜີ້ດຳເນີນການໃນນາມຂອງຕົນ ເພື່ອດຳເນີນການເກັບຈາກຄົນເຈັບ ຖ້າຫາກວ່າຄົນເຈັບ:

- ມີ DFA ທີ່ຍັງມີຜົນສັກສິດ ສຳລັບການບໍລິການຕິດຕາມອາການ ຫຼື
- ໄດ້ເລີ່ມປະກອບໃບຄຳຮ້ອງຂໍສະໝັກ DFA ແລ້ວ ຫຼັງຈາກມີການເລີ່ມການດຳເນີນການເກັບໜີ້. ການດຳເນີນການເກັບໜີ້ຈະຖືກລະງັບໄວ້ ຈົນກວ່າຈະມີການພິຈາລະນາຕັດສິນການມີສິດໄດ້ຮັບຂັ້ນສຸດທ້າຍແລ້ວ.

**5.8.5 ການດຳເນີນການເກັບໜີ້ທີ່ອະນຸຍາດ.**

**5.8.5.1 ການພິຈາລະນາໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນຂັ້ນສຸດທ້າຍ.**

ກ່ອນທີ່ຈະເລີ່ມການດຳເນີນການເກັບໜີ້ໃດໆ, ຮອງຜູ້ອຳນວຍການໃຫຍ່, Patient Access and Balance Collections (ໜ່ວຍງານການເຂົ້າເຖິງຄົນເຈັບ ແລະ ການເກັບໜີ້) ຈະຕ້ອງຮັບປະກັນ ສິ່ງຕໍ່ໄປນີ້:

Proprietary Information. Kaiser Permanente. All rights reserved.

**5.8.5.1.1 ຄວາມພະຍາຍາມທີ່ສົມເຫດສົມຜົນໃນການແຈ້ງເຕືອນຄົນເຈັບ.**

ການໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນເພື່ອແຈ້ງໃຫ້ຄົນເຈັບຮັບຊາບກ່ຽວກັບໂຄງການ DFA ໃຫ້ສຳເລັດ ແລະ

**5.8.5.1.2 ການໃຫ້ກຳນົດເວລາທີ່ສົມເຫດສົມຜົນເພື່ອໃຫ້ຄົນເຈັບຍື່ນຄຳຮ້ອງຂໍສະໝັກ.**

ຄົນເຈັບໄດ້ຮັບເວລາຢ່າງໜ້ອຍ 240 ວັນ ນັບຈາກວັນອອກໃບບິນຮຽກເກັບເງິນຄັ້ງທຳອິດ ເພື່ອຍື່ນຄຳຮ້ອງຂໍສະໝັກ DFA.

**5.8.5.1.3 ການລາຍງານໃຫ້ໜ່ວຍງານສິນເຊື່ອຜູ້ບໍລິໂພກ ຫຼື ສຳນັກງານສິນເຊື່ອ.**

KFHPNW ຫຼື ໜ່ວຍງານເກັບໜີ້ທີ່ເຮັດໜ້າທີ່ໃນນາມຂອງຕົນ ອາດຈະລາຍງານຂໍ້ມູນທີ່ບໍ່ເພິ່ງປະສົງຕໍ່ໜ່ວຍງານລາຍງານສິນເຊື່ອຜູ້ບໍລິໂພກ ຫຼື ສຳນັກງານສິນເຊື່ອ ພຽງສະເພາະແຕ່ບັນດາໃບບິນຮຽກເກັບເງິນຄ້າງຈ່າຍສຳລັບການບໍລິການດູແລແຂ້ວຂອງ KP ທີ່ລວມເຂົ້າກັນແລ້ວມີມູນຄ່າເກີນ $500.

**5.8.6 ການດຳເນີນການເກັບໜີ້ທີ່ຖືກຫ້າມ.**

KFHPNW ຈະບໍ່ດຳເນີນການ, ອະນຸຍາດ ຫຼື ອະນຸຍາດໃຫ້ໜ່ວຍງານເກັບໜີ້ດຳເນີນມາດຕະການຕ່າງໆດັ່ງຕໍ່ໄປນີ້ ພາຍໃຕ້ສະພາບການໃດກໍຕາມ:

- ຂາຍໜີ້ຂອງຝ່າຍທີ່ຮັບຜິດຊອບໃບບິນຮຽກເກັບເງິນຄ້າງຈ່າຍສຳລັບການບໍລິການດູແລແຂ້ວຂອງ KP ໃຫ້ແກ່ບຸກຄົນທີສາມ.
- ການຍຶດຊັບສິນ ຫຼື ການອາຍັດບັນຊີ.
- ຂໍໝາຍຈັບ.
- ຮ້ອງຂໍໝາຍພາຕົວ.

Proprietary Information. Kaiser Permanente. All rights reserved.

- ມາດຕະການທາງສານ ຫຼື ທາງແພ່ງ ເຊັ່ນ: ການຫັກເງິນເດືອນ, ການຫັກເງິນຈາກບັນຊີທະນາຄານຂອງບຸກຄົນ ຫຼື ຊັບສິນສ່ວນຕົວອື່ນໆ ຫຼື ຍຶດບ່ອນຢູ່.

Proprietary Information. Kaiser Permanente. All rights reserved.

| | |
|---|---|
| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອໍານວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອໍານວຍການຝ່າຍທັນຕະກໍາບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**16 ຈາກ 18** |

**ເອກະສານຊ້ອນທ້າຍ A – ປະມວນຄໍາສັບ**

**ໜ່ວຍງານເກັບໜີ້**

ບຸກຄົນ ຫຼື ອົງກອນທີ່ດໍາເນີນການ ຫຼື ປະຕິບັດການເກັບໜີ້ໂດຍທາງກົງ ຫຼື ທາງອ້ອມ ຫຼື ພະຍາຍາມເກັບໜີ້ສິນທີ່ຕິດຄ້າງ ຫຼື ຖືກກ່າວຫາວ່າຕິດຄ້າງເຈົ້າໜີ້ ຫຼື ຜູ້ຊື້ໜີ້ສິນ.

**ໂຄງການການຊ່ວຍເຫຼືອທາງດ້ານການເງິນທາງທັນຕະກໍາ (DFA)**

ໂຄງການ DFA ຂອງ KP ລວມໂຄງການການດູແລເພື່ອການກຸສົນ/ໂຄງສ່ວນຫຼຸດເຕັມສ່ວນ ແລະ ບາງສ່ວນ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ບັນດາຄົນເຈັບທີ່ມີສິດໄດ້ຮັບ ທີ່ບໍ່ສາມາດຈ່າຍຄ່າບໍລິການດູແລແຂ້ວທີ່ຈໍາເປັນທັງໝົດ ຫຼື ບາງສ່ວນຂອງຕົນໄດ້. ບຸກຄົນຕ່າງໆຕ້ອງບັນລຸໃຫ້ໄດ້ຕາມເກນຂອງໂຄງການ ສໍາລັບການຊ່ວຍເຫຼືອໃນການຈ່າຍຄ່າເບິ່ງແຍງດູແລຄົນເຈັບບາງສ່ວນ ຫຼື ທັງໝົດ.

**ຄົນເຈັບທີ່ມີສິດໄດ້ຮັບ**

ບຸກຄົນທີ່ບັນລຸໄດ້ຕາມເກນການມີສິດໄດ້ຮັບ ທີ່ໄດ້ອະທິບາຍໄວ້ໃນນະໂຍບາຍສະບັບນີ້, ບໍ່ວ່າຄົນເຈັບຈະ (1) ບໍ່ມີປະກັນໄພ; (2) ໄດ້ຮັບການຄຸ້ມຄອງການດູແລແຂ້ວຜ່ານໂຄງການສາທາລະນະ (ເຊັ່ນ: Medicaid); (3) ໄດ້ຮັບການປະກັນໄພໂດຍແຜນປະກັນໄພແຂ້ວອື່ນ ນອກເໜືອຈາກ KFHPNW; ຫຼື (4) ໄດ້ຮັບການຄຸ້ມຄອງໂດຍ KFHPNW.

**ແຫຼ່ງຂໍ້ມູນພາຍນອກ**

ຂໍ້ມູນທີ່ບັນດາຜູ້ໃຫ້ບໍລິການບຸກຄົນທີສາມ ນໍາມາໃຊ້ເພື່ອກວດສອບຂໍ້ມູນສ່ວນຕົວຂອງຄົນເຈັບ ເພື່ອປະເມີນຄວາມຕ້ອງການທາງດ້ານການເງິນ ໂດຍການນໍາໃຊ້ຮູບແບບທີ່ອີງໃສ່ຖານຂໍ້ມູນບັນທຶກສາທາລະນະ ທີ່ຈະປະເມີນຄົນເຈັບແຕ່ລະຄົນ ໂດຍອີງໃສ່ມາດຕະຖານດຽວກັນ ເພື່ອຄິດໄລ່ຄະແນນຄວາມສາມາດທາງດ້ານການເງິນຂອງຄົນເຈັບ.

**ຄໍາແນະນໍາກ່ຽວກັບຄວາມທຸກຍາກຂອງລັດຖະບານກາງ (FPG)**

ລະດັບລາຍໄດ້ປະຈໍາປີສໍາລັບຄວາມທຸກຍາກ ຕາມການກໍານົດໂດຍ ກະຊວງສາທາລະນະສຸກ ແລະ ການບໍລິການມະນຸດແຫ່ງສະຫະລັດອາເມລິກາ ແລະ ມີການປັບປຸງໃໝ່ປະຈໍາປີຢູ່ໃນ ສໍານັກທະບຽນຂອງລັດຖະບານກາງ.

Proprietary Information. Kaiser Permanente. All rights reserved.

| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
|---|---|
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອໍານວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອໍານວຍການຝ່າຍທັນຕະກໍາບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**17 ຈາກ 18** |

**ບໍ່ມີທີ່ຢູ່ອາໄສ**

ຕົວລະບຸສະຖານະ ສໍາລັບສະຖານະການດໍາລົງຊີວິດຂອງບຸກຄົນ, ດັ່ງທີ່ອະທິບາຍໄວ້ຂ້າງລຸ່ມນີ້:

- ຢູ່ໃນສະຖານທີ່ທີ່ບໍ່ໄດ້ມີໄວ້ເພື່ອການຢູ່ອາໄສຂອງມະນຸດ ເຊັ່ນ: ລົດ, ສວນສາທາລະນະ, ແຄມທາງ, ຕຶກອາຄານຮ້າງ (ຢູ່ເທິງຖະໜົນ).
- ຢູ່ໃນທີ່ພັກເຊົາສຸກເສີນ.
- ຢູ່ໃນທີ່ຢູ່ອາໄສໄລຍະຂ້າມຜ່ານ ຫຼື ອຸປະຖໍາ ສໍາລັບຄົນທີ່ບໍ່ມີທີ່ຢູ່ອາໄສ ທີ່ເດີມທີແລ້ວແມ່ນມາຈາກຂ້າງຖະໜົນ ຫຼື ທີ່ພັກເຊົາສຸກເສີນ.
- ຢູ່ໃນສະຖານທີ່ໃດໜຶ່ງຂ້າງເທິງນັ້ນ ແຕ່ໃຊ້ເວລາສັ້ນໆ (ເຖິງ 30 ວັນຕິດຕໍ່ກັນ) ໃນໂຮງໝໍ ຫຼື ສະຖາບັນອື່ນໆ.
- ກໍາລັງຈະຖືກຂັບໄລ່ອອກພາຍໃນໜຶ່ງອາທິດຈາກທີ່ພັກອາໄສເອກະຊົນ ຫຼື ກໍາລັງຫຼົບໜີຈາກສະຖານະການການໃຊ້ຄວາມຮຸນແຮງໃນຄອບຄົວ ທີ່ບໍ່ມີການລະບຸທີ່ຢູ່ອາໄສໃນພາຍຫຼັງ ແລະ ບຸກຄົນດັ່ງກ່າວຂາດແຄນແຫຼ່ງຊັບພະຍາກອນ ແລະ ເຄືອຂ່າຍການສະໜັບສະໜູນທີ່ຈໍາເປັນເພື່ອໃຫ້ໄດ້ຮັບທີ່ຢູ່ອາໄສ.
- ກໍາລັງຖືກປ່ອຍຕົວອອກພາຍໃນໜຶ່ງອາທິດຈາກສະຖາບັນ, ເຊັ່ນ: ສະຖານບໍາບັດສຸຂະພາບຈິດ ຫຼື ສານເສບຕິດ ທີ່ບຸກຄົນໄດ້ເຂົ້າພັກອາໄສຢູ່ຢ່າງຕໍ່ເນື່ອງຫຼາຍກວ່າ 30 ວັນຕິດຕໍ່ກັນ, ແລະ ບໍ່ມີບ່ອນຢູ່ອາໄສຕໍ່ມາທີ່ໄດ້ຖືກລະບຸ, ແລະ ບຸກຄົນຂາດເຂີນຊັບພະຍາກອນທາງການເງິນ ແລະ ເຄືອຂ່າຍສະໜັບສະໜູນທາງສັງຄົມທີ່ຈໍາເປັນ ເພື່ອໃຫ້ໄດ້ທີ່ຢູ່ອາໄສ.

**KP**

ລວມທັງ Kaiser Foundation Health Plan of the Northwest, Permanente Dental Association ແລະ ບັນດາບໍລິສັດໃນເຄືອຂອງຕົນ, ຍົກເວັ້ນບໍລິສັດ Kaiser Permanente Insurance Company (KPIC).

**ການບໍລິການດູແລແຂ້ວທີ່ຈໍາເປັນ**

ປະກອບດ້ວຍ ການດູແລ, ການປິ່ນປົວ ຫຼື ການບໍລິການທາງດ້ານທັນຕະກໍາ ທີ່ສັ່ງ ຫຼື ສະໜອງໃຫ້ໂດຍຜູ້ໃຫ້ບໍລິການດູແລແຂ້ວຂອງ KFHPNW ທີ່ຈໍາເປັນສໍາລັບການປ້ອງກັນ, ການປະເມີນຜົນ, ການບົ່ງມະຕິ ຫຼື ການປິ່ນປົວສະພາບແຂ້ວ ທີ່ບໍ່ແມ່ນເພື່ອອໍານວຍຄວາມສະດວກແກ່ຄົນເຈັບ ຫຼື ຜູ້ໃຫ້ບໍລິການດ້ານການດູແລແຂ້ວ. ໝາຍເຫດ: ການຊ່ວຍເຫຼືອສໍາລັບການຄຸ້ມຄອງຄ່າໃຊ້ຈ່າຍການບໍລິການທາງການແພດສຸກເສີນ ແລະ ຈໍາເປັນທາງການແພດ, ໃບສັ່ງແພດ ແລະ ອຸປະກອນໃນຮ້ານຢາ (ລວມທັງໃບສັ່ງແພດດ້ານການດູແລແຂ້ວທີ່ຜູ້ໃຫ້ບໍລິການຂອງ KP ຂຽນໃຫ້) ແມ່ນໄດ້ຮັບການຄຸ້ມຄອງພາຍໃຕ້ໂຄງການຊ່ວຍເຫຼືອດ້ານການເງິນທາງການແພດ (MFA) ຂອງ KP.

Proprietary Information. Kaiser Permanente. All rights reserved.

| | |
|---|---|
| ຊື່ນະໂຍບາຍ<br>**Dental Financial Assistance** | ໝາຍເລກນະໂຍບາຍ<br>**NW.CB.002** |
| ພະແນກຮັບຜິດຊອບ<br>**Charity Care, Community Benefits** | ວັນທີມີຜົນບັງຄັບໃຊ້<br>**1 ມັງກອນ 2026** |
| ເຈົ້າຂອງເອກະສານ<br>**ຜູ້ອຳນວຍການໃຫຍ່, Kaiser Foundation Health Plan & Hospitals of the Northwest ຜູ້ອຳນວຍການຝ່າຍທັນຕະກຳບໍລິຫານ ແລະ CEO ຂອງ Permanente Dental Associates** | ໜ້າ<br>**18 ຈາກ 18** |

**ຄ່າໃຊ້ຈ່າຍຂອງຄົນເຈັບ**

ສັດສ່ວນຄ່າບໍລິການທີ່ຮຽກເກັບຈາກຄົນເຈັບສຳລັບການດູແລທີ່ໄດ້ຮັບຢູ່ຄລີນິກປົວແຂ້ວຂອງ KP ທີ່ບໍ່ໄດ້ຮັບການຊົດເຊີຍຄືນຈາກບໍລິສັດປະກັນໄພ ຫຼື ໂຄງການດູແລແຂ້ວທີ່ໄດ້ຮັບທຶນຈາກລັດ.

**ມີປະກັນໄພມູນຄ່າຕໍ່າ**

ບຸກຄົນຜູ້ທີ່ເຖິງແມ່ນວ່າຈະມີການຄຸ້ມຄອງການດູແລແຂ້ວກໍຕາມ, ແຕ່ພົບວ່າພັນທະໃນການຈ່າຍເບ້ຍປະກັນໄພ, ການຈ່າຍຮ່ວມ, ການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດແມ່ນເປັນພາລະທາງດ້ານການເງິນທີ່ສຳຄັນ ທີ່ເຮັດໃຫ້ຄົນເຈັບໄດ້ຮັບການບໍລິການດູແລແຂ້ວທີ່ຈຳເປັນຊັກຊ້າ ຫຼື ບໍ່ໄດ້ຮັບເລີຍ ເນື່ອງຈາກຄ່າໃຊ້ຈ່າຍທີ່ຕ້ອງໄດ້ຈົກຖົງຈ່າຍເອງ.

**ບໍ່ມີປະກັນໄພ**

ບຸກຄົນຜູ້ທີ່ບໍ່ມີປະກັນໄພສຳລັບການດູແລແຂ້ວ ຫຼື ການຊ່ວຍເຫຼືອທາງດ້ານການເງິນທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານກາງ ຫຼື ລັດ ເພື່ອຊ່ວຍຈ່າຍຄ່າການບໍລິການດູແລແຂ້ວທີ່ຈຳເປັນ.

Proprietary Information. Kaiser Permanente. All rights reserved.